# ການສືບສວນຂອງພະແນກປ້ອງກັນຜູ້ໃຫຍ່ເຈັ້ຣຄວາມຈິງ
## Adult Protective Services (APS) InvestigationsFact Sheet

ພະແນກປ້ອງກັນຜູ້ໃຫຍ່ (APS) ກໍາລັງທໍາການສືບສວນລາຍງານວ່າທ່ານອາດຈະໄດ້ກົດຂີ່ຂົ່ມເຫັງ, ປ່ອຍປະຖິ້ມ, ຫາຜົນປະໂຍດດ້ານການເງິນ, ຫລື ປ່ອຍປະລະເລີຍຜູ້ໃຫຍ່ທີ່ອ່ອນແອ. ເອກສານອັນນີ້ແຈ້ງບອກທ່ານກ່ຽວກັບວິທີດໍາເນີນການຂອງການສືບສວນ, ສິດທິຂອງທ່ານ, ແລະ ຣາຍຣະອຽດສໍາຄັນອື່ນໆ. ໃນຖານະເປັນສ່ວນນຶ່ງຂອງການສືບສວນ, ພະແນກ APS ຈະກວດເບິ່ງບັນທຶກຄືນ ແລະ ສໍາພາດຜູ້ຄົນກ່ຽວກັບການກ່າວຫາ.

ຜົນອອກມາຂອງການສືບສວນສາມາດມີຜົນສະທ້ອນຮ້າຍແຮງສໍາລັບທ່ານ.
ກະຣຸນາອ່ານຢ່າງລະມັດລະວັງ.

| |
|---|
| ຜູ້ສືບສວນທີ່ຖືກແຕ່ງຕັ້ງໃສ່ສໍານວນເອກສານຂອງທ່ານແມ່ນ: |
| ເຂົາເຈົ້າສາມາດຖືກຕິດຕໍ່ຫາໄດ້ທີ່: |

## ສິດທິແນວໃດແດ່ທີ່ຂ້ອຍມີຢູ່?

- ທ່ານມີສິດທິທີ່ຈະໃຫ້ພາກສ່ວນທີສາມ (ເຊັ່ນວ່າຫມູ່ເພື່ອນ, ທະນາຍຄວາມ, ຜູ້ຕາງຫນ້າຢູນຽນ, ສະມາຊິກຄອບຄົວ, ຫລື ຜູ້ປົກຄອງ) ຢູ່ນໍາທ່ານໃນເວລາການສໍາພາດ.
- ຖ້າຫາກວ່າພາສາອັງກິດບໍ່ແມ່ນພາສາດັ້ງເດີມຂອງທ່ານ, ທ່ານມີສິດທີ່ຈະໄດ້ນາຍແປພາສາຟຣີ (ພະແນກ APS ບໍ່ອະນຸຍາດໃຫ້ໃຊ້ສະມາຊິກຂອງຄອບຄົວໃຫ້ເປັນນາຍແປພາສາ).
- ທ່ານມີສິດທິທີ່ຈະບໍ່ເຂົ້າຮ່ວມນໍາໃນການສໍາພາດ, ທີ່ຈະຢຸດ, ຫລື ເຮັດຫມາຍນັດໃຫມ່.
- ທ່ານມີສິດທິທີ່ຈະເອົາເອກສານໃຫ້ພະແນກ APS ຫລື ພະຍານທີ່ກ່ຽວພັນນໍາການກ່າວຫາ.

## ພະແນກ APS ຈະແຈ້ງບອກຂ້ອຍໄດ້ແນວໃດກ່ຽວກັບຜົນອອກມາຂອງການສືບສວນ?

- ພະແນກ APS ທໍາການຕັດສິນອີງໃສ່ຫລັກຖານທີ່ພະແນກ APS ໄດ້ເກັບກໍາມາໃນຣະຫວ່າງການສືບສວນ. ຊະນິດຂອງການຕັດສິນທີ່ພະແນກ APS ຈະເຮັດແມ່ນ:
  - **ຖືກພິສູດຢືນຢັນ:** ຄ້າຍຄືຫລາຍກວ່າບໍ່ແມ່ນທີ່ເຫດການທີ່ຖືກກ່າວຫາໄດ້ເກີດຂຶ້ນ
  - **ບໍ່ຖືກພິສູດຢືນຢັນ:** ຄ້າຍຄືຫລາຍກວ່າບໍ່ແມ່ນທີ່ເຫດການທີ່ຖືກກ່າວຫາບໍ່ໄດ້ເກີດຂຶ້ນ
  - **ລົງຄວາມເຫັນບໍ່ໄດ້:** ບໍ່ສາມາດທີ່ຈະພິຈາຣະນາໄດ້ວ່າເຫດການທີ່ຖືກກ່າວຫາໄດ້ເກີດຂຶ້ນຫລືບໍ່.
- ຖ້າຫາກວ່າ APS ພົບເຫັນວ່າມັນຄ້າຍຄືຫລາຍກວ່າບໍ່ແມ່ນທີ່ເຫດການໄດ້ເກີດຂຶ້ນ. APS ຈະແຈ້ງບອກທ່ານໂດຍການສົ່ງຫນັງສືໄປຫາທ່ານໂດຍທາງໄປສະນີຢັ້ງຢືນ ຫລື ທັມມະດາ.
- ຖ້າຫາກວ່າ APS ພົບເຫັນວ່າມັນຄ້າຍຄືຫລາຍກວ່າບໍ່ແມ່ນທີ່ເຫດການບໍ່ໄດ້ເກີດຂຶ້ນ APS ຈະແຈ້ງບອກທ່ານໂດຍທາງປາກເປົ່າ. ພະແນກ APS ສາມາດເອົາຫນັງສືໃຫ້ທ່ານຖ້າຫາກວ່າທ່ານຖາມເອົາ.
- ຖ້າຫາກວ່າ APS ບໍ່ສາມາດພິຈາຣະນາເບິ່ງວ່າເຫດການໄດ້ເກີດຂຶ້ນຫລືບໍ່, APS ຈະແຈ້ງບອກທ່ານໂດຍທາງປາກເປົ່າ. APS ສາມາດເອົາຫນັງສືໃຫ້ທ່ານຖ້າຫາກວ່າທ່ານຖາມເອົາ.
- ຖ້າຫາກວ່າ APS ບໍ່ມີທີ່ຢູ່ປັດຈຸບັນຂອງທ່ານ. ເຂົາເຈົ້າຈະສົ່ງຫນັງສືໄປຫາທີ່ຢູ່ຜິດ, ແລະ ທ່ານອາດຈະພາດວັນຕາຍໂຕທີ່ສໍາຄັນ.

## ການຄົ້ນພົບທີ່ຖືກພິສູດຢືນຢັນໝາຍຄວາມວ່າແນວໃດ?

ຖ້າຫາກວ່າ APS ຕັດສິນວ່າການກ່າວຫາກ່ຽວກັບການກົດຂີ່ຂົ່ມເຫັງ, ປ່ອຍປະລະເລີຍ, ປ່ອຍປະຖິ້ມ, ຫລື ຫາຜົນປະໂຫຍດດ້ານການເງິນໄດ້ "ຖືກພິສູດຢືນຢັນ", ທ່ານສາມາດຮ້ອງຂໍເອົາການຟັງເຣື່ອງໄດ້ຖ້າຫາກວ່າທ່ານບໍ່ເຫັນພ້ອມນຳການຄົ້ນພົບ. ຖ້າຫາກວ່າຄຳຕັດສິນຂອງ APS ໄດ້ຖືກເຫັນພ້ອມນຳໃນບັ້ນທ້າຍຂອງວິທີດຳເນີນການຟັງເຣື່ອງ, ຊື່ຂອງທ່ານຈະຖືກວາງໃສ່ໃນທະບຽນ.

**ການມີຊື່ຢູ່ໃນທະບຽນໝາຍຄວາມວ່າທ່ານອາດຈະບໍ່ສາມາດທີ່ຈະເຮັດວຽກ ຫລື ອາສາສະມັກນຳບ່ອນໃດບ່ອນນຶ່ງໄດ້ທີ່ທ່ານອາດຈະມີການຕິດຕໍ່ທີ່ບໍ່ຖືກຄວບຄຸມເບິ່ງນຳຜູ້ໃຫຍ່ ຫລື ເດັກນ້ອຍທີ່ອ່ອນແອ. ໃນປັດຈຸບັນນີ້, ມັນບໍ່ມີຫົນທາງແນວໃດເລີຍທີ່ຈະເອົາຊື່ຂອງທ່ານອອກຈາກທະບຽນໄດ້.**

## ຂ້ອຍສາມາດຄັດຄ້ານການຕັດສິນຂອງພະແນກ APS ໄດ້ບໍ່?

- ຖ້າຫາກວ່າ APS ຕັດສິນວ່າເຫດການທີ່ຖືກກ່າວຫາແມ່ນ **ບໍ່ຖືກພິສູດຢືນຢັນ** ຫລື **ລົງຄວາມເຫັນບໍ່ໄດ້** ທ່ານບໍ່ຕ້ອງເຮັດຫຍັງໝົດ.
- ຖ້າຫາກວ່າ APS ຕັດສິນວ່າເຫດການທີ່ຖືກກ່າວຫາແມ່ນ **ຖືກພິສູດຢືນຢັນ** ແລະທ່ານບໍ່ເຫັນພ້ອມນຳຕັດສິນ ທ່ານຈະຮ້ອງຂໍເອົາການຟັງເຣື່ອງໄດ້. ໜັງສືຂອງ APS ຈະບອກທ່ານວ່າຈະເຮັດແນວໃດ.

**ເພື່ອຈະຮ້ອງຂໍເອົາການຟັງເຣື່ອງ,ທ່ານມີເວລາພຽງແຕ່ຮອດ 5:00 ໂມງແລງໃນວັນທີ 30 ຕາມປະຕິທິນເທົ່ານັ້ນຫລັງຈາກວັນທີທີ່ໃບໜັງສືແຈ້ງການຂອງກົມໄດ້ຖືກສົ່ງອອກໄປ ຫລື ສົ່ງໃຫ້ທ່ານໂດຍຕົນເອງ,ບໍ່ວ່າວັນໃດມາຮອດກ່ອນ.**

## ເພື່ອຮາຍຣະອຽດເພີ້ມເຕີມ

ທ່ານສາມາດໄດ້ຮາຍຣະອຽດເພີ້ມເຕີມກ່ຽວກັບພະແນກ APS ໄດ້ທາງອອນລາຍນ໌ທີ່ https://www.dshs.wa.gov/altsa/adult-protective-services-aps.